ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ລັດວິສາຫະກິດໄຟຟ້າລາວ

ເລກທີ 2455 ຟຟລ/ຝວຜ

07 JUL 2021

ນະຄອນຫຼວງວຽງຈັນ, ວັນທີ................

# ແຈ້ງການ

**ເຖິງ** : ບັນດາ ບໍລິສັດ ສະໜອງ ໝໍ້ນັບໄຟ ທັງພາຍໃນ ແລະ ຕ່າງປະເທດ.

**ເລື່ອງ** : ຂໍເຊີນ ບໍລິສັດ ທີ່ມີຄວາມສົນໃຈ ຢາກນຳສະເໜີ ໝໍ້ນັບໄຟ ພາກທີ່ຢູ່ອາໃສ ທີ່ຮອງຮັບລະບົບ ສື່ສານ Hand Held Unit (HHU).

- ອີງໃສ່ ການຊີ້ນຳ ຂອງທ່ານຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຄັ້ງວັນທີ 29.6.2021.

ລັດວິສາຫະກິດໄຟຟ້າລາວ ຂໍຖືເປັນກຽດແຈ້ງມາຍັງ ບັນດາບໍລິສັດ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມສົນໃຈ ຢາກນຳສະເໜີ ຜະລິດຕະພັນ ຂອງຕົນເອງ ແລະ ເຂົ້າຮ່ວມທົດລອງ ໝໍ້ນັບໄຟ ພາກທີ່ຢູ່ອາໃສ ຊະນິດ 1 ເຟສ ແລະ 3 ເຟສ ແບບຕໍ່ກົງ ທີ່ສາມາດ ຮອງຮັບລະບົບສື່ສານ Hand Held Unit (HHU).

ສະນັ້ນ, ຈຶ່ງມີຈຸດປະສົງ ຢາກຮຽນເຊີນ ບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ຕ້ອງການ ຢາກນຳສະເໜີ ຜະລິດຕະພັນ ໝໍ້ນັບໄຟ ຕົນເອງ ແລະ ເຂົ້າຮ່ວມທົດລອງ ການໃຊ້ງານ ກັບວິຊາການ ຂອງໄຟຟ້າລາວ, ຖ້າຫາກບໍລິສັດໃດ ຫາກ ຜ່ານການຄັດເລືອກ ແລະ ມີສະເປັກເຕັກນິກ ຕາມຄວາມຕ້ອງການ ຂອງໄຟຟ້າລາວ ແລ້ວຈະມີລາຍຊື່ເຂົ້າຮ່ວມ ການປະມູນ ໝໍ້ນັບໄຟ ປະຈຳປີ, ລາຍລະອຽດ ສະເປັກພື້ນຖານຂອງອຸປະກອນ ມີດັ່ງລຸ່ມນີ້ :

**1. ສະເປັກ ພື້ນຖານ ຂອງໝໍ້ນັບໄຟ.**

| ລ/ດ | ຊະນິດ ໝໍ້ນັບໄຟ | ຄ່າຄວາມທ່ຽງຕົງ | ຮອງຮັບ ມາດຕະຖານສາກົນ | ຮອງຮັບ ລະບົບສື່ສານ | ຮອງຮັບ ອຸປະກອນສື່ສານ | ໝາຍເຫດ |
|---|---|---|---|---|---|---|
| 1 | 1 ເຟສ ແບບຕໍ່ກົງ 230V,5/60A,50Hz, IP54 Outdoor | ± 1% | - IEC 62053-21<br>- IEC 62052-11<br>- IEC 62056 DLMS/COSEM<br>- IEC61107 Optical port | - RF<br>- Bluetooth | Hand Held Unit (HHU) | ລະບົບສື່ສານ ແມ່ນເລືອກເອົາ RF ຫຼື Bluetooth ກໍ່ໄດ້, ແຕ່ຕ້ອງເປັນຄື້ນຄວາມຖີ່ ທີ່ບໍ່ມີຄ່າໃຊ້ຈ່າຍປະຈຳເດືອນ |
| 2 | 3 ເຟສ ແບບຕໍ່ກົງ 230/400V,5/100A, 50Hz, IP54 Outdoor | | | | | |

**2. ສະເປັກ ພື້ນຖານ Hand Held Unit (HHU).**

| ລ/ດ | ລາຍລະອຽດ | ຮອງຮັບ ມາດຕະຖານສາກົນ | ຮອງຮັບ ລະບົບສື່ສານ | ຮອງຮັບ ການເຊື່ອມຕໍ່ | ໝາຍເຫດ |
|---|---|---|---|---|---|
| 1 | Hand Held Unit (HHU) | - IEC 62056 DLMS/COSEM | - RF<br>- Bluetooth | - Computer<br>- PC Software | ສາມາດ ໃຊ້ງານ ອຸປະກອນ ຢູ່ນອກອາຄານໄດ້ ແລະ ຕ້ອງເປີດ ໃຫ້ອຸປະກອນ ສາມາດຮອງຮັບ ການອ່ານ ໝໍ້ນັບໄຟ ໄດ້ຫຼາຍຍີ່ຫໍ້ |

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ບັນດາບໍລິສັດ ທີ່ມີຄວາມສົນໃຈ ຢາກນຳສະເໜີ ຜະລິດຕະພັນ ແລະ ເຂົ້າຮ່ວມທົດລອງ ລະບົບສື່ສານ ລະຫວ່າງ ໝໍ້ນັບໄຟ ແລະ Hand Held Unit (HHU) ຈະຕ້ອງກະກຽມເອກະສານ ດັ່ງລຸ່ມນີ້ :

ຖະໜົນມິດຕະພາບລາວ-ໄທ, ຕູ້ປ.ນ 309, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ

ໂທ: (856-21)451537, 316094-1508. ແຟັກ: (856-21)416381, 316128, ອີເມລ: edlmdo@edl.com.la ເວັບໄຊ: www.edl.com.la

1. ໜັງສື ສະເໜີ ແຈ້ງເຈດຈຳນົງ ຂໍນຳສະເໜີ ຜະລິດຕະພັນ ແລະ ຮ່ວມທົດລອງ ໝໍ້ນັບໄຟ.
2. ສະເປັກເຕັກນິກ ຂອງ ໝໍ້ນັບໄຟ ແລະ Hand Held Unit (HHU) ຄັດຕິດ.
3. ເອກະສານ ໃບມອບສິດ ຈາກບໍລິສັດຜູ້ຜະລິດ ໝໍ້ນັບໄຟ (ໃນກໍລະນີ ເປັນຕົວແທນ).
4. ເອກະສານ ຢັ້ງຢືນ ປະສົບການ ໃນການຜະລິດ ໝໍ້ນັບໄຟ ຂອງໂຮງງານ ຢ່າງໜ້ອຍ 5 ປີ ຂຶ້ນໄປ.

ໄລຍະເວລາ ໃນການເປີດຮັບ ໜັງສືແຈ້ງເຈດຈຳນົງ ເລີ້ມແຕ່ ເດືອນ 7/2021-11/2021, ຖ້າຫາກບໍລິສັດໃດ ຫາກ ສົ່ງ ໜັງສືແຈ້ງເຈດຈຳນົງ ຊ້າກ່ວາ ເວລາທີ່ກຳນົດ ຖືວ່າສະລະສິດ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

**ຜູ້ອຳນວຍການໃຫຍ່**

ກະຊວງພະລັງງານ ແລະ ບໍ່ແຮ່
ລັດວິສາຫະກິດ
ໄຟຟ້າລາວ
EDL
ນະຄອນຫຼວງວຽງຈັນ

ພອງປະສິດ ເພັດສີສຸກ
ຮອງຜູ້ອຳນວຍການໃຫຍ່